ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ                    ເລກທີ.606./ຖວທ
ນະຄອນຫຼວງວຽງຈັນ,ວັນທີ 03../12../2021

# ບົດແນະນຳ

## ການຄັດເລືອກ ບຸກຄົນ, ຄອບຄົວ ແລະ ບ້ານວັດທະນະທຳດີເດັ່ນ

- ອີງຕາມ ດຳລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທຳ ສະບັບເລກທີ 123/ລບ, ລົງວັນທີ 16/02/2021
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 09 ມີນາ 2017.
- ອີງຕາມ ດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ 166/ລບ, ລົງວັນທີ 22/4/2019. ເພື່ອເຮັດໃຫ້ການຄັດເລືອກບຸກຄົນ, ຄອບຄົວ ແລະ ບ້ານວັດທະນະທຳດີເດັ່ນ ຢູ່ຂັ້ນແຂວງ ໃນທົ່ວປະເທດ ມີຄວາມເປັນເອກະພາບ ຮັບປະກັນທາງດ້ານເນື້ອໃນ ແລະ ເນັ້ນໜັກດ້ານຄຸນນະພາບ ສາມາດເປັນຕົວແບບທີ່ດີເດັ່ນຮອບດ້ານ ໃນການພັດທະນາ.

ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງອອກບົດແນະນຳກ່ຽວກັບການຄັດເລືອກບຸກຄົນ, ຄອບຄົວ ແລະ ບ້ານວັດທະນະທຳດີເດັ່ນ ຕາມເນື້ອໃນເງື່ອນໄຂມາດຕະຖານ ທີ່ກຳນົດໄວ້ໃນມາດຕາ 19 ຂອງ ດຳລັດ ເລກທີ 123/ລບ, ລົງວັນທີ 16/02/2021 ຊຶ່ງມີດັ່ງນີ້:

## I. ເປົ້າໝາຍໃຫ້ການຍ້ອງຍໍ

1. ບຸກຄົນດີເດັ່ນ (ທີ່ເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານວັດທະນະທຳ)
2. ຄອບຄົວວັດທະນະທຳດີເດັ່ນ
3. ບ້ານວັດທະນະທຳດີເດັ່ນ
4. ບຸກຄົນ ແລະ ກົມກອງລວມໝູ່ ໃຫ້ການອຸປະຖຳທາງດ້ານວັດຖຸເງິນຄຳ ເຂົ້າໃນຂະບວນການສ້າງຄອບຄົວ ແລະ ບ້ານວັດທະນະທຳ

**1. ມາດຕະຖານ ເງື່ອນໄຂການຍ້ອງຍໍ ບຸກຄົນດີເດັ່ນ (ທີ່ເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານວັດທະນະທຳ)**

ມາດຕະຖານເງື່ອນໄຂຂອງບຸກຄົນດີເດັ່ນ ມີດັ່ງນີ້:

- ເປັນຄົນທີ່ມີຄຸນສົມບັດ ສິນທຳປະຕິວັດ, ມີທັດສະນະຫລັກໝັ້ນ ມີດສັດຕູຢ່າງຖືກຕ້ອງຕາມແນວທາງນະໂຍບາຍຂອງພັກໃນທຸກດ້ານ ໂດຍສະເພາະກ່ຽວກັບວຽກງານການສ້າງວັດທະນະທຳໃນໄລຍະໃໝ່ທີ່ມີຄຸນປະໂຫຍດໃຫ້ແກ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຕ່າງໆ.

- ເປັນຄົນທີ່ມີຄວາມດຸໝັ່ນ ອົດທົນ, ຫ້າວຫັນ ແລະ ເປັນແບບຢ່າງໃນການເຄື່ອນໄຫວ ຈັດຕັ້ງປະຕິບັດວຽກງານການສ້າງຊີວິດວັດທະນະທຳຢູ່ຮາກຖານກໍຄືການສ້າງຄອບຄົວ ແລະ ບ້ານວັດທະນະທຳ.
- ເປັນຄົນທີ່ມີຄວາມຮູ້ ຄວາມສາມາດ ໃນການຊີ້ນຳ ນຳພາ, ມີຫົວຄິດປະດິດສ້າງ, ມີແບບແຜນວິທີເຮັດວຽກທີ່ດີ, ເປັນເຈົ້າການໃນການປຸກລະດົມ ຂົນຂວາຍມະຫາຊົນເຂົ້າຮ່ວມໃນຂະບວນການສ້າງຄອບຄົວ ແລະ ບ້ານວັດທະນະທຳ.
- ເປັນບຸກຄົນທີ່ມີຈິດໃຈຮັກເຊື້ອແພງຊາດ, ຮັກບ້ານເກີດເມືອງນອນຂອງຕົນ, ຮັກ ແລະ ປົກປັກຮັກສາວັດທະນະທຳອັນດີງາມຂອງຊາດ ຂອງເຜົ່າຕົນເອງ ເປັນເຈົ້າການຕໍ່ວຽກງານການສ້າງຄອບຄົວ ແລະ ບ້ານວັດທະນະທຳຢ່າງສຸດກຳລັງ.

  <u>ຂໍ້ແນະນຳ</u>: ສຳລັບການຄັດເລືອກບຸກຄົນດີເດັ່ນ ແມ່ນບຸກຄົນທີ່ເຄື່ອນໄຫວວຽກງານການສ້າງຄອບຄົວ ແລະ ບ້ານວັດທະນະທຳ ຢ່າງໜ້ອຍ 5 ປີຂຶ້ນໄປ.

**2. ມາດຖານເງື່ອນໄຂຍ້ອງຍໍຄອບຄົວວັດທະນະທຳດີເດັ່ນ:**

- ເປັນຄອບຄົວທີ່ໄດ້ຮັບໃບຢັ້ງຢືນເປັນຄອບຄົວວັດທະນະທຳ 3 ປີຕໍ່ເນື່ອງ.
- ເປັນຄອບຄົວທີ່ໄດ້ຮັບຮອງເປັນຄອບຄົວຕົວແບບໃດໜຶ່ງໃນຂະບວນແຂ່ງຂັນ ຮັກຊາດ ຮັກພັດທະນາ.
- ເປັນຄອບຄົວທີ່ໄດ້ຮັບການປະເມີນຜົນຕາມມາດຕະຖານຂອງຄອບຄົວວັດທະນະທຳ.
- ເປັນຄອບຄົວທີ່ມີການພັດທະນາທາງດ້ານເສດຖະກິດ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ, ເປັນຄອບຄົວທີ່ມີແບບແຜນການດຳລົງຊີວິດວັດທະນະທຳສົດໃສກ້າວໜ້າ.
- ເປັນຄອບຄົວທີ່ມີປະຊາທິປະໄຕ, ມີຄວາມສາມັກຄີ ຮັກແພງເຊິ່ງກັນ ແລະ ກັນ ພາຍໃນ ແລະ ພາຍນອກ, ມີນ້ຳໃຈ ເອື້ອເຟື້ອເຜື່ອແຜ່ ຊ່ວຍເຫຼືອເຊິ່ງກັນ ແລະ ກັນພາຍໃນບ້ານດີ.

**3. ມາດຖານເງື່ອນໄຂຍ້ອງຍໍບ້ານວັດທະນະທຳດີເດັ່ນ:**

- ເປັນບ້ານທີ່ໄດ້ຮັບນາມມະຍົດເປັນບ້ານວັດທະນະທຳ 3 ປີຕໍ່ເນື່ອງ.
- ເປັນບ້ານທີ່ໄດ້ຮັບຮອງເປັນບ້ານຕົວແບບໃດໜຶ່ງໃນຂະບວນແຂ່ງຂັນ "ຮັກຊາດ ແລະ ຮັກພັດທະນາ".
- ເປັນບ້ານທີ່ໄດ້ຮັບນາມມະຍົດເປັນບ້ານໜ່ວຍພັກແຂງຮູ້ນຳພາຮອບດ້ານຢ່າງໜ້ອຍ 3 ປີ ລຽນຕິດ.
- ອົງການຈັດຕັ້ງມະຫາຊົນ ມີຂະບວນການຈັດຕັ້ງເຄື່ອນໄຫວປະຕິບັດຕາມແນວທາງ ນະໂຍບາຍຂອງພັກ-ລັດ ເປັນປົກກະຕິຢ່າງເຂັ້ມແຂງ.
- ພາຍໃນບ້ານຕ້ອງມີຄອບຄົວວັດທະນະທຳທີ່ໄດ້ຮັບໃບຢັ້ງຢືນເປັນຄອບຄົວວັດທະນະທຳ 95% ຂຶ້ນໄປ.
- ເປັນບ້ານວັດທະນະທຳທີ່ໄດ້ຮັບການປະເມີນຜົນຕາມມາດຕະຖານຂອງບ້ານວັດທະນະທຳ.

**4. ມາດຕະຖານ ເງື່ອນໄຂຍ້ອງຍໍ ບຸກຄົນ ແລະ ກົມກອງລວມໝູ່ ໃຫ້ການອຸປະຖຳທາງດ້ານວັດຖຸເງິນຄຳ**

- ມູນຄ່າການຊ່ວຍເຫຼືອ 500,000 ຫາ 3,000,000 ກີບ ປະເພດການຍ້ອງຍໍ ຂັ້ນເມືອງ
- ມູນຄ່າການຊ່ວຍເຫຼືອ 3,000,000 ກີບ ຂຶ້ນໄປຫາ 5,000,000 ກີບ ປະເພດການຍ້ອງຍໍຂັ້ນແຂວງ, ນະຄອນຫຼວງ
- ມູນຄ່າການຊ່ວຍເຫຼືອ 5,000,0000 ກີບ ຂຶ້ນໄປ ປະເພດການຍ້ອງຍໍຂັ້ນກະຊວງ

## II. ຮູບການຍ້ອງຍໍ ວຽກງານການສ້າງຄອບຄົວ ແລະ ບ້ານວັດທະນະທຳ

**1. ບຸກຄົນດີເດັ່ນ:**

- ຫລຽນໄຊແຮງງານຊັ້ນ I
- ຫລຽນໄຊແຮງງານຊັ້ນ II
- ຫລຽນໄຊແຮງງານຊັ້ນ III
- ຫລຽນກາແຮງງານ
- ໃບຍ້ອງຍໍຂັ້ນລັດຖະບານ
- ໃບຍ້ອງຍໍຂັ້ນກະຊວງ
- ໃບຍ້ອງຍໍຂັ້ນແຂວງ
- ໃບຍ້ອງຍໍຂັ້ນເມືອງ

**ໝາຍເຫດ:** ບຸກຄົນດີເດັ່ນໃນການເຄື່ອນໄຫວວຽກງານສ້າງຄອບຄົວ ແລະ ບ້ານວັດທະນະທຳ ທີ່ມີຜົນງານ 5 ປີ ຂຶ້ນໄປ: ການປະເມີນຜົນແມ່ນ 3 ປີ/1ຄັ້ງ; ປະເມີນຜົນຄັ້ງທີ 1 ໄດ້ຮັບການຍ້ອງຍໍຂັ້ນເມືອງ, ປະເມີນຜົນຄັ້ງທີ 2 ໄດ້ຮັບການຍ້ອງຍໍຂັ້ນແຂວງ, ປະເມີນຜົນຄັ້ງທີ 3 ໄດ້ຮັບການຍ້ອງຍໍຂັ້ນກະຊວງ, ປະເມີນຜົນຄັ້ງທີ 4 ໄດ້ຮັບການຍ້ອງຍໍຂັ້ນລັດຖະບານ ແລະ ບັນດາຫຼຽນກາແຮງງານ, ຫຼຽນໄຊແຮງງານ......ແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ

**2. ຄອບຄົວວັດທະນະທຳດີເດັ່ນ:**

- ຫລຽນໄຊແຮງງານຊັ້ນ I
- ຫລຽນໄຊແຮງງານຊັ້ນ II
- ຫລຽນໄຊແຮງງານຊັ້ນ III
- ຫລຽນກາແຮງງານ
- ໃບຍ້ອງຍໍຂັ້ນລັດຖະບານ
- ໃບຍ້ອງຍໍຂັ້ນກະຊວງ
- ໃບຍ້ອງຍໍຂັ້ນແຂວງ
- ໃບຍ້ອງຍໍຂັ້ນເມືອງ

**ໝາຍເຫດ:** ຄອບຄົວວັດທະນະທຳດີເດັ່ນ: ການປະເມີນຜົນ ແມ່ນປະເມີນໃນແຕ່ລະປີ ຖ້າປະເມີນຜົນຄົບ 3 ມີຕໍ່ເນື່ອງ ແມ່ນໄດ້ຮັບການຍ້ອງຍໍເຊັ່ນ: ຄັ້ງທີ 1 ໄດ້ຮັບການຍ້ອງຍໍຂັ້ນເມືອງ, ຄັ້ງທີ 2 ໄດ້ຮັບການຍ້ອງຍໍຂັ້ນແຂວງ, ຄັ້ງທີ 3 ໄດ້ຮັບການຍ້ອງຍໍຂັ້ນກະຊວງ, ຄັ້ງທີ 4 ໄດ້ຮັບການຍ້ອງຍໍຂັ້ນລັດຖະບານ, ບັນດາຫຼຽນກາແຮງງານ, ຫຼຽນໄຊແຮງງານ......ແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ.

**3. ບ້ານວັດທະນະທຳດີເດັ່ນ:**

- ຫລຽນໄຊອິດສະຫຼະ ຊັ້ນ I, ຊັ້ນ II ແລະ ຊັ້ນ III
- ຫລຽນໄຊແຮງງານ ຊັ້ນ I, ຊັ້ນ II ແລະ ຊັ້ນ III
- ຫລຽນກາແຮງງານ
- ໃບຍ້ອງຍໍຂັ້ນລັດຖະບານ

- ໃບຍ້ອງຍໍຂັ້ນກະຊວງ
- ໃບຍ້ອງຍໍຂັ້ນແຂວງ
- ໃບຍ້ອງຍໍຂັ້ນເມືອງ

ໝາຍເຫດ: ບ້ານວັດທະນະທຳດີເດັ່ນ: ການປະເມີນຜົນ ແມ່ນປະເມີນໃນແຕ່ລະປີ ຖ້າປະເມີນຜົນຄົບ 3 ປີຕໍ່ເນື່ອງ ແມ່ນໄດ້ຮັບການຍ້ອງຍໍເຊັ່ນ: ຄັ້ງທີ 1 ໄດ້ຮັບການຍ້ອງຍໍຂັ້ນເມືອງ, ຄັ້ງທີ 2 ໄດ້ຮັບການຍ້ອງຍໍຂັ້ນແຂວງ, ຄັ້ງທີ 3 ໄດ້ຮັບການຍ້ອງຍໍຂັ້ນກະຊວງ, ຄັ້ງທີ 4 ໄດ້ຮັບການຍ້ອງຍໍຂັ້ນລັດຖະບານ, ບັນດາຫຼຽນກາແຮງງານ, ຫຼຽນໄຊແຮງງານ......ແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ.

## III. ການປະກອບເອກະສານ

- ໜັງສືສະເໜີ
- ບົດສະຫຼຸບການປະເມີນຜົນ
- ບົດລາຍງານ
- ໃບເກັບກຳຜົນງານ

## IV. ການຈັດຕັ້ງປະຕິບັດ.

ມອບໃຫ້ກົມວັດທະນະທຳມະຫາຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສົມທົບກັບພະແນກຖະແຫຼງຂ່າວ,ວັດທະນະທຳ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ເປັນຜູ້ຊີ້ນຳການຈັດຕັ້ງຜັນຂະຫຍາຍບົດແນະນຳ ສະບັບນີ້ໃຫ້ເກີດດອກອອກຜົນ ແລະ ມີຜົນສຳເລັດ.

ລັດຖະມົນຕີ

ສວນສະຫວັນ ວິຍະເກດ